# ຄະນະ 3 ອົງການຈັດຕັ້ງມະຫາຊົນ ທຫລ.ສຂ ເລີ້ມເຄື່ອນໄຫວວຽກງານຕາມແຜນປີ 2017





ໃນວັນທີ 17 ມັງກອນ 2017, ທີ່ຜ່ານມາ 3 ອົງການຈັດຕັ້ງມະຫາຊົນຂອງ ທຫລ.ສຂ ໄດ້ຈັດກອງປະຊຸມ ໃນຫົວຂໍ້: ເຜີຍແຜ່ວຽກງານຄຸ້ມຄອງສະຖາບັນການເງິນຂື້ນຢູ່ທີ່ຫ້ອງປະຊຸມໃຫ່ຍຊັ້ນ IV ຂອງ ທຫລ,ສຂ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 52 ສະຫາຍ, ຍິງ 28 ທາຍ ຈຸດປະສົງເພື່ອເປັນການສ້າງຄວາມຮູ້-ຄວາມເຂົ້າໃຈກ່ຽວກັບວຽກງານພາລະບົດບາດ, ຂອບເຂດສິດ ແລະ ໜ້າທີຂອງພະແນກຄຸ້ມຄອງສະຖາບັນການເງິນ ໃຫ້ບັນດາສະມາຊິກພາຍໃນ 3 ອົງການຈັດຕັ້ງມະຫາຊົນ ທຫລ.ສຂ ໂດຍຜູ້ນໍາສະເໜີແມ່ນສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຈາກພະແນກຄຸ້ມຄອງສະຖາບັນການເງິນ ຕະຫຼອດໄລຍະຂອງກອງປະຊຸ່ມເຫັນວ່າສະມາຊິກທຸກໆສະຫາຍໄດ້ໃຫ້ຄວາມສົນໃຈ ແລະ ເອົາໃຈໃສ່ຮັບຟັງການນໍາສະເໜີຈາກພະແນກກ່ຽວຂ້ອງເປັນຢ່າງດີ ແລະ ຖາມ-ຕອບ ດ້ວຍບັນຍາກາດທີຟົດຟື້ນ.



- ຂ່າວ: ສຸລິເດດ ຍົດລືໄຊ
- ພາບ: ເດດອາລຸນ ແສນທະວົງ